

## ຈຸດປະສົງ

ຈຸດປະສົງ ຂອງເຄືອຂ່າຍອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ(INN) ແມ່ນເພື່ອເປັນສູນກາງໃນການກະຈາຍຂໍ້ມູນຂ່າວສານໃຫ້ແກ່ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ (ອສບລ) ພາຍໃນ ສປປ ລາວ. ຈຸດປະສົງຫຼັກ ແມ່ນເພື່ອອຳນວຍຄວາມສະດວກ ແລະ ເສີມຂະຫຍາຍວຽກງານຂອງສະມາຊິກຂອງ INN, ຊຸກຍູ້ການຮ່ວມມື ແລະ ການແລກປ່ຽນຂໍ້ມູນຂ່າວສານລະຫວ່າງອົງກອນ, ຄູ່ຮ່ວມງານໃນການພັດທະນາ ແລະ ລັດຖະບານລາວ.

## ສະມາຊິກ

ໃນປີ 2023, ເຄືອຂ່າຍ ອສບລ ມີສະມາຊິກຈຳນວນ 72 ອົງກອນ, ເຊິ່ງເຄືອຂ່າຍ ລວມມີ ອສບລ ຈາກຫຼາກຫຼາຍຂະແໜງ ທີ່ມຸ່ງໝັ້ນໃນການປະກອບສວນເຂົ້າໃນການພັດທະນາ ສປປ ລາວ. ທຶນໃນການບໍລິຫານເຄືອຂ່າຍແມ່ນມາຈາກຄ່າທຳນຽມຂອງສະມາຊິກ ເພື່ອໃຫ້ເຄືອຂ່າຍມີຄວາມຍືນຍົງ ແລະ ຄວາມສາມາດໃນການໃຫ້ບໍລິການສະມາຊິກຢ່າງມີປະສິດທິພາບ.

## ຈຸດສຸມຂອງ ພວກເຮົາ

**ການປະສານງານ ແລະ ການແລກປ່ຽນຂໍ້ມູນ:** ສົ່ງເສີມການປະສານງານ ແລະ ການແລກປ່ຽນຂໍ້ມູນລະຫວ່າງ ສະມາຊິກ ເຄືອຂ່າຍ ອສບລ ໃຫ້ມີປະສິດທິພາບ, ສ້າງພື້ນທີ່ໃນການຮ່ວມມືເພື່ອແລກປ່ຽນຄວາມຮູ້ ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ແລະ ສ້າງການຮ່ວມມືທີ່ເຂັ້ມແຂງ. ພວກເຮົາສຸມໃສ່ຊ່ວຍໃຫ້ສະມາຊິກສາມາດປະກອບສ່ວນ ເຂົ້າໃນການພັດທະນາ ສປປ ລາວ ໄດ້ຢ່າງສູງສຸດໂດຍການຮ່ວມມືກັນ.
**ການເປັນຕົວແທນ ແລະ ການສົນທະນາກ່ຽວກັບນະໂຍບາຍ:** ເຄືອຂ່າຍ ອສບລ ເຮັດໜ້າທີ່ເປັນສຽງຕົວແທນໃຫ້ສະມາຊິກ ໃນຫົວຂໍ້ ແລະ ວຽກງານທີ່ກ່ຽວຂ້ອງກັບ ອສບລ. ພວກເຮົາມີສ່ວນຮ່ວມຢ່າງຕັ້ງໜ້າໃນການສົນທະນາດ້ານວຽກງານນະໂຍບາຍ ແລະ ສົ່ງເສີມໃຫ້ມີສະພາບແວດລ້ອມທີ່ເອື້ອອຳນວຍການເຮັດວຽກຂອງສະມາຊິກ ແລະ ເພື່ອສະໜັບສະໜູນວຽກງານໃຫ້ແກ່ສັງຄົມລາວ.

## ພວກເຮົາແມ່ນໃຜ

ເຄືອຂ່າຍ ອສບລ ໃນ ສປປ ລາວ ເປັນກຸ່ມທີ່ມີຄວາມເຂັ້ມແຂງ ແລະ ຫຼາກຫຼາຍ. ສ້າງຕັ້ງຂຶ້ນໃນເດືອນມັງກອນ ປີ 2005 ຈາກການສະໜັບສະໜູນເບື້ອງຕົ້ນໂດຍທະນາຄານໂລກ, ເຄືອຂ່າຍໄດ້ລິເລີ່ມຂຶ້ນໂດຍກຸ່ມ ອສບລ ເພື່ອສົ່ງເສີມການຮ່ວມມື ແລະ ການແລກປ່ຽນຂໍ້ມູນລະຫວ່າງອົງກອນສະມາຊິກ.

## ຮ່ວມກັບພວກເຮົາປະກອບສ່ວນເຂົ້າໃນການພັດທະນາ ສປປ ລາວ.

*ຮ່ວມກັນ ພວກເຮົາສາມາດບັນລຸການພັດທະນາແບບຍືນຍົງ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນໄດ້.*

## ຫນ້າທີ່ຂອງເຄືອຂ່າຍ INGO

### ເຜີຍແຜ່ຂໍ້ມູນຂ່າວສານ:

ພວກເຮົາເປັນຈຸດປະສານງານ ແລະ ເຜີຍແຜ່ຂໍ້ມູນ ລວມທັງບົດລາຍງານຕ່າງໆ ທີ່ກ່ຽວຂ້ອງກັບ ອສບລ, ຜ່ານຊ່ອງທາງການສື່ສານທີ່ຫຼາກຫຼາຍຂອງພວກເຮົາ ເພື່ອໃຫ້ຂໍ້ມູນໄດ້ທັນເວລາ ແລະ ເຂົ້າເຖິງສະມາຊິກ.

### ຂໍ້ມູນຂ່າວສານ ແລະ ການຮຽນຮູ້:

ພວກເຮົາອຳນວຍຄວາມສະດວກໃຫ້ສະມາຊິກໄດ້ແລກປ່ຽນຂໍ້ມູນ ແລະຄວາມຮູ້ ໂດຍການຈັດງານພົບປະ, ງານສຳມະນາ ແລະ ການປະຊຸມຮ່ວມກັນຂອງອົງການ, ຄູ່ຮ່ວມພັດທະນາ ແລະ ພາກສ່ວນທີ່ກ່ຽວຂ້ອງຈາກລັດຖະບານ. ເພື່ອຊຸກຍູ້ການຮ່ວມມື, ການຮຽນຮູ້, ແລກປ່ຽນຂໍ້ມູນເຊິ່ງກັນ ແລະ ກັນ.

### ສົ່ງເສີມດ້ານນະໂຍບາຍ:

ເຄືອຂ່າຍ ອສບລ ມີສ່ວນຮ່ວມໃນການປຶກສາຫາລືດ້ານນະໂຍບາຍ, ເຮັດວຽກຄຽງຄູ່ກັບລັດຖະບານ ສປປ ລາວ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງໃນການສະໜັບສະໜູນການພັດທະນາແບບຍືນຍົງ.

## ຂໍ້ມູນສຳລັບຕິດຕໍ່

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບ ເຄືອຂ່າຍ ອສບລ ຫຼື ຕ້ອງການມີສ່ວນຮ່ວມ ສາມາດຕິດຕໍ່ພວກເຮົາໄດ້ທີ່:

+856 20 555990066
ingonetwork@directoryofngos.org
www.directoryofngos.org
**ຫ້ອງການ ອົງການແພລນສາກົນປະຈຳ ສປປ ລາວ, ນະຄອນຫຼວງວຽງຈັນ**



ingo ລາວ network

## OUR MISSION

The mission of the INGO Network is to serve as a central hub for INGO information dissemination in Lao PDR. Our core purpose is to facilitate and enhance the work of our members, fostering collaboration, and information exchange among INGOs, development partners, and the Government of Laos.

## MEMBERSHIP

As of 2023, the INGO Network maintains a strong and diverse membership base. With 72 members, the Network represents a wide range of organizations dedicated to making a positive impact in Lao PDR. The Network is primarily funded through membership fees, ensuring its sustainability and ability to serve its members effectively.

## OUR FOCUS

Liaison and Information Sharing: The INGO Network actively promotes liaison and information sharing among INGOs, creating a collaborative platform for knowledge exchange and mutual support. By fostering strong partnerships, we strive to maximize the collective impact of our members.

Representation and Policy Dialogue: The INGO Network acts as a representative voice for its members, advocating for their interests and concerns in relevant forums. We actively engage in policy dialogue and promote an enabling environment for civil society in Laos.

# ABOUT US

**The INGO Network is a dynamic community of INGOs operating in Lao PDR. Established in January 2005 with initial support from the World Bank, the Network was initiated by the INGO community to foster collaboration and information sharing among its members.**

**JOIN US IN MAKING A DIFFERENCE IN LAO PDR THROUGH COLLABORATION AND COLLECTIVE ACTION.**

*Together, we can achieve sustainable development and empower communities.*

## OUR SERVICES

### Information Dissemination:

We serve as a focal point for INGO-related information, disseminating updates, reports, and resources to our members. Our comprehensive communication channels ensure timely and relevant information reaches our network.

### Networking and Collaboration:

We facilitate networking opportunities, workshops, and conferences that bring together INGOs, development partners, and government stakeholders. By fostering collaboration, we encourage collective learning and the exchange of best practices.

### Policy Advocacy:

The INGO Network engages in policy advocacy, working with the Government of Laos and other stakeholders to shape policies that support sustainable development and address the needs of communities.

## CONTACT US

For more information about the INGO Network or to get involved, please contact us:

+856 20 555990066

ingonetwork@directoryofngos.org

www.directoryofngos.org

C/O Plan International Laos, Vientiane Office